ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
-----===000===-----

ເລກທີ: 507--
ນະຄອນຫຼວງວຽງຈັນ, ວັນທີ: 04 MAY 2020

ມະຕິກອງປະຊຸມສະພາບໍລິຫານ ຄັ້ງທີ 3/2020

ກອງປະຊຸມສະພາບໍລິຫານຂອງບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ (ພກພ) ຄັ້ງທີ 3/2020 ໄດ້ຈັດຂຶ້ນໃນວັນທີ 04 ພຶດສະພາ 2020 ເວລາ 10:00 ໂມງ, ທີ່ຊັ້ນ 3 ໂຮງແຮມ ຄອນທີເນັນໂທ ພລາຊາ, ບ້ານ ໜອງບົວທອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ສປປ ລາວ, ພາຍໃຕ້ການເປັນປະທານຂອງ ທ່ານ ສີທອງ ພົມມະຈິດ ເຊິ່ງມີສະມາຊິກສະພາບໍລິຫານ ແລະ ຜູ້ທີ່ກ່ຽວຂ້ອງເຂົ້າຮ່ວມ. ກອງປະຊຸມໄດ້ພິຈາລະນາ ແລະ ມີມະຕິເຫັນດີເປັນເອກະພາບກັນດັ່ງນີ້:

1. ຮັບຮອງເອົາບົດລາຍງານຜົນການດຳເນີນງານຂອງບໍລິສັດ ປະຈຳປີ 2019 ແລະ ເອກະສານລາຍງານການເງິນ ປະຈຳປີ 2019 ທີ່ຜ່ານການກວດສອບຈາກບໍລິສັດກວດສອບ ໃຫ້ນຳສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2019 ພິຈາລະນາ ແລະ ຮັບຮອງ;
2. ຮັບຮອງເອົາການບໍ່ຈ່າຍເງິນປັນຜົນ ປະຈຳປີ 2019 ເນື່ອງມາຈາກບໍລິສັດຂາດທຶນ ໃຫ້ນຳສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2019 ພິຈາລະນາ ແລະ ຮັບຮອງ;
3. ຮັບຮອງເອົາ ແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2020 ໃຫ້ນຳສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2019 ພິຈາລະນາ ແລະ ຮັບຮອງ;
4. ແຕ່ງຕັ້ງ ບໍລິສັດ KPMG Lao Co., Ltd ເປັນຜູ້ກວດສອບບັນຊີພາຍນອກ ສຳລັບປີ 2020 ໃຫ້ນຳສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2019 ພິຈາລະນາ ແລະ ຮັບຮອງ;
5. ຮັບຮອງສະພາບໍລິຫານຊຸດໃໝ່ ວາລະເຮັດວຽກປີ 2020-2022 ໃຫ້ນຳສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2019 ພິຈາລະນາ ແລະ ຮັບຮອງ;
6. ກຳນົດເອົາວັນທີ 15 ພຶດສະພາ 2020 ເປັນມື້ປິດປຶ້ມທະບຽນຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2019;
7. ກຳນົດເອົາວັນທີ 29 ພຶດສະພາ 2020 ເປັນມື້ຈັດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2019. ໂດຍຈັດທີ່ຊັ້ນ 2, ໂຮງແຮມ ຄອນທີເນັນໂທ ພລາຊາ, ບ້ານ ໜອງບົວທອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ສປປ ລາວ;
8. ກຳນົດວາລະກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2019, ມີລາຍລະອຽດດັ່ງນີ້:
   ວາລະທີ 1: ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2018;
   ວາລະທີ 2: ພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນງານຂອງບໍລິສັດ ປະຈຳປີ 2019 ແລະ ເອກະສານລາຍງານການເງິນ ປະຈຳປີ 2019 ທີ່ຜ່ານການກວດສອບຈາກບໍລິສັດກວດສອບ;
   ວາລະທີ 3: ພິຈາລະນາການບໍ່ຈ່າຍເງິນປັນຜົນ ປະຈຳປີ 2019;

ວາລະທີ 4: ພິຈາລະນາ ແລະ ຮັບຮອງແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2020;
ວາລະທີ 5: ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງຜູ້ກວດສອບພາຍນອກປະຈຳປີ 2020;
ວາລະທີ 6: ພິຈາລະນາ ແລະ ຮັບຮອງສະພາບໍລິຫານຊຸດໃໝ່ ວາລະເຮັດວຽກປີ 2020-2022.

ດັ່ງນັ້ນ, ຈຶ່ງຮຽນລາຍງານມາຍັງທ່ານ ເພື່ອຊາບ.

ດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ
ປະທານສະພາບໍລິຫານ

ສີທອງ ພົມມະຈິດ

ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ, ຊັ້ນ 3, ໂຮງແຮມ ຄອນທິເນັນໂທ ພລາຊາ, ບ້ານ ໜອງບົວທອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫລວງວຽງຈັນ, ສປປ ລາວ. Tel/Fax: (856-21) 265 394; E-mail: info@pcdlao.com; website: www.pcdlao.com